ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2261 /ຫອຄ.ກຂອ.ຄຄ

ນະຄອນຫຼວງວຽງຈັນ, ວັນທີ 15 ສິງຫາ 2014

## ແຈ້ງການ

ເຖິງ : - ທ່ານຫົວໜ້າກົມພາສີ, ກະຊວງການເງິນ

- ທ່ານປະທານສະພາບໍລິຫານເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ
- ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຫ້ອງການສະພາການຄ້າ ແລະ ອຸດສາຫະກຳແຂວງ

**ເລື່ອງ** : ການນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ Form AJ ສະບັບປັບປຸງໃໝ່

- ອີງໃສ່ບົດບັນທຶກກອງປະຊຸມຄະນະກຳມະການດ້ານລະບຽບແຫຼ່ງກຳເນີດສິນຄ້າອາຊຽນ-ຍີ່ປຸ່ນ ຄັ້ງທີ 9, ລະຫວ່າງ 18-21 ມີນາ 2014 ກ່ຽວກັບການຕົກລົງເຫັນດີປັບປຸງ Form AJ.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ນັບແຕ່ວັນທີ 1 ຕຸລາ 2014 ເປັນຕົ້ນໄປ ຈະໄດ້ເລີ່ມນຳໃຊ້ Form AJ (ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ-ຍີ່ປຸ່ນ) ສະບັບປັບປຸງໃໝ່, ຊຶ່ງໄດ້ມີການປັບປຸງຫົວຂໍ້ຂອງຫ້ອງທີ 9 ຈາກຄຳວ່າ **"Quantity (gross or net weight or other quantity) and value, e.g. FOB if required by exporting Party"** ມາເປັນ **"Gross weight or other quantity and value (FOB) only when RVC criterion is used"**, ແລະ ໄດ້ເພີ່ມຄຳອະທິບາຍອີກໜຶ່ງຫົວຂໍ້ໃສ່ດ້ານຫຼັງຂອງໃບຟອມ ຄື: "FREE-ON-BOARD (FOB) VALUE: The FOB value in Box 9 shall be reflected only when the Regional Value Content criterion is applied in determining the origin of goods. The CO (Form AJ) issued to and from Cambodia and Myanmar shall reflect the FOB value, regardless of the origin criteria used, for the next two (2) years upon the implementation of this new arrangement"

Form AJ ສະບັບປະຈຸບັນ ແມ່ນສາມາດນຳໃຊ້ຄວບຄູ່ກັບ Form AJ ສະບັບປັບປຸງໃໝ່ໄດ້ 6 ເດືອນ ຫຼື ຮອດວັນທີ 31 ມີນາ 2015. ຫຼັງຈາກນັ້ນ ຫຼື ເລີ່ມຈາກວັນທີ 1 ເມສາ 2015 ເປັນຕົ້ນໄປ ແມ່ນໃຫ້ນຳໃຊ້ແຕ່ຟອມສະບັບປັບປຸງໃໝ່ຢ່າງດຽວເທົ່ານັ້ນ. ສະນັ້ນ, ຢູ່ໃນຊ່ວງນີ້ ບໍ່ຄວນສັ່ງພິມ Form AJ ສະບັບປະຈຸບັນໄວ້ເປັນຈຳນວນຫຼາຍ ເພື່ອຫຼີກລ້ຽງການນຳໃຊ້ບໍ່ໝົດ

ເຮັດໃຫ້ສິ້ນເປືອງງົບປະມານໂດຍບໍ່ຈຳເປັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ກະລຸນາຈັດຕັ້ງປະຕິບັດ ພ້ອມທັງແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງທີ່ຂຶ້ນກັບການຄຸ້ມຄອງຂອງທ່ານຊາບ ແລະ ຈັດຕັ້ງປະຕິບັດໃຫ້ທັນຕາມກຳນົດເວລາ.

ຫົວໜ້າຫ້ອງການ,

ສົມຫວັງ ນິນທະວົງ

**ບ່ອນນຳສົ່ງ:**

- ຫົວໜ່ວຍທຸລະກິດທີ່ນຳໃຊ້ Form AJ "ເພື່ອຈັດຕັ້ງປະຕິບັດ"
- ກົມນະໂຍບາຍການຄ້າຕ່າງປະເທດ "ເພື່ອຊາບ"
- ກົມອາຊຽນ, ກະຊວງການຕ່າງປະເທດ "ເພື່ອຊາບ"
- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ "ເພື່ອຊາບ"